ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ສຳນັກງານປົກປ້ອງເງິນຝາກ ເລກທີ 03 /ສປງ

ນະຄອນຫຼວງວຽງຈັນ, ວັນທີ 29 ມິນາ 2022

# ຄຳແນະນຳ

## ການຕອບຄຳຖາມຂອງຜູ້ຝາກເງິນ ກ່ຽວກັບການປົກປ້ອງເງິນຝາກ.

- ອີງຕາມ ດຳລັດວ່າດ້ວຍການປົກປ້ອງເງິນຝາກ ສະບັບເລກທີ 329/ລບ, ລົງວັນທີ 25 ຕຸລາ 2017;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ສຳນັກງານປົກປ້ອງເງິນຝາກ ສະບັບເລກທີ 68/ທຫລ, ລົງວັນທີ 22 ມັງກອນ 2019;
- ອີງຕາມ ແຈ້ງການ ກ່ຽວກັບການຈັດຕັ້ງປະຕິບັດວຽກງານປົກປ້ອງເງິນຝາກ ສະບັບເລກທີ 25/ສປງ, ລົງວັນທີ 25 ມິນາ 2022.

ເພື່ອເຮັດໃຫ້ບັນດາສະມາຊິກຂອງ ສຳນັກງານປົກປ້ອງເງິນຝາກ ໂດຍສະເພາະພະນັກງານທີ່ເຮັດໜ້າທີ່ບໍລິການລູກຄ້າ (Teller), ພະນັກງານທະນາຄານ ແລະ ພະນັກງານທີ່ເຮັດວຽກຕິດພັນກັບວຽກງານເປີດບັນຊີ ສາມາດແນະນຳຂໍ້ມູນພື້ນຖານ ກ່ຽວກັບການປົກປ້ອງເງິນຝາກ ໃຫ້ຜູ້ຝາກເງິນ. ເພື່ອຮັບປະກັນໃຫ້ພວກເຂົາ ໄດ້ຮັບຮູ້-ເຂົ້າໃຈຢ່າງຖືກຕ້ອງ ແລະ ເປັນເອກະພາບຕໍ່ກັບຫຼັກການພື້ນຖານຂອງວຽກງານປົກປ້ອງເງິນຝາກ. ສຳນັກງານປົກປ້ອງເງິນຝາກ ໄດ້ກະກຽມເນື້ອໃນການຕອບຄຳຖາມທີ່ນິຍົມຖາມ ກ່ຽວກັບການປົກປ້ອງເງິນຝາກ ດັ່ງລາຍລະອຽດລຸ່ມນີ້:

1. **ສຳນັກງານປົກປ້ອງເງິນຝາກ ແມ່ນຫຍັງ?**

ສຳນັກງານປົກປ້ອງເງິນຝາກ (ສປງ) ຫຼື Deposit Protection Office (DPO) ແມ່ນ ການຈັດຕັ້ງການເງິນຂອງລັດ ມີຖານະທຽບເທົ່າກົມ, ເປັນນິຕິບຸກຄົນ ທີ່ເຄື່ອນໄຫວໂດຍບໍ່ສະແຫວງຫາຜົນກຳໄລ, ມີຄວາມເປັນເອກະລາດທາງດ້ານການເງິນ, ຢູ່ພາຍໃຕ້ການຄຸ້ມຄອງຂອງ ທະນາຄານແຫ່ງ ສປປ ລາວ ແລະ ມີພາລະບົດບາດໃນການປົກປ້ອງສິດ ແລະ ຜົນປະໂຫຍດ ອັນຊອບທຳຂອງຜູ້ຝາກເງິນ ທີ່ຝາກໄວ້ນຳສະມາຊິກຂອງ ສຳນັກງານປົກປ້ອງເງິນຝາກ.

2. **ເງິນຝາກທີ່ໄດ້ຮັບການປົກປ້ອງ ມີເງິນຝາກປະເພດໃດແດ່?**

ເງິນຝາກທີ່ໄດ້ຮັບການປົກປ້ອງ ມີ 03 ປະເພດຄື: ເງິນຝາກກະແສລາຍວັນ, ເງິນຝາກປະຢັດ ແລະ ເງິນຝາກມີກຳນົດ ທີ່ເປັນສະກຸນເງິນກີບ ແລະ ສະກຸນເງິນຕາຕ່າງປະເທດ.

3. **ຜູ້ຝາກເງິນທີ່ໄດ້ຮັບການປົກປ້ອງ ມີໃຜແດ່?**

ຜູ້ຝາກເງິນທີ່ໄດ້ຮັບການປົກປ້ອງ ປະກອບມີ: ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ.

4. ເງິນຝາກທີ່ບໍ່ໄດ້ຮັບການປົກປ້ອງ ມີເງິນຝາກໃດແດ່?

ເງິນຝາກທີ່ບໍ່ໄດ້ຮັບການປົກປ້ອງ ມີດັ່ງນີ້:

1) **ເງິນຝາກຂອງຜູ້ບໍລິຫານ** ໝາຍເຖິງ ເງິນຝາກຂອງ ກຳມະການສະພາບໍລິຫານ, ຄະນະອຳນວຍການ, ຫົວໜ້າພະແນກ ແລະ ຫົວໜ້າສາຂາຂອງ ສະຖາບັນການເງິນເອງ ຫຼື ຜູ້ມີຕຳແໜ່ງທຽບເທົ່າ ທີ່ໄດ້ຮັບນະໂຍບາຍເທົ່າກັບຕຳແໜ່ງຜູ້ບໍລິຫານທີ່ກ່າວມານັ້ນ;

2) **ເງິນຝາກຂອງຜູ້ຖືຮຸ້ນລາຍໃຫຍ່** ໝາຍເຖິງ ເງິນຝາກຂອງ ຜູ້ຖືຮຸ້ນ ແຕ່ສິບສ່ວນຮ້ອຍ (10%) ຂຶ້ນໄປຂອງຈຳນວນຮຸ້ນທັງໝົດ ທີ່ສາມາດລົງຄະແນນສຽງໄດ້ ໃນສະຖາບັນການເງິນເອງ;

3) **ເງິນຝາກຂອງສະຖາບັນການເງິນອື່ນ** ໝາຍເຖິງ ເງິນຝາກຂອງ ທະນາຄານທຸລະກິດ, ສະຖາບັນການເງິນຈຸລະພາກ, ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ, ໂຮງຊວດຈຳ, ບໍລິສັດເຊົ່າສິນເຊື່ອ ແລະ ສະຖາບັນການເງິນອື່ນ ຊຶ່ງຢູ່ພາຍໃຕ້ການຄຸ້ມຄອງຂອງ ທະນາຄານແຫ່ງ ສປປ ລາວ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

4) **ເງິນຝາກຄັງເງິນແຫ່ງຊາດ** ໝາຍເຖິງ ເງິນຝາກຂອງການຈັດຕັ້ງບໍລິຫານວິຊາການ ທີ່ຄຸ້ມຄອງ-ບໍລິຫານເງິນຂອງລັດ ໃຫ້ລວມສູນເຂົ້າບັນຊີຄັງເງິນແຫ່ງຊາດ ຕາມລະບົບສາຍຕັ້ງໃນຂອບເຂດທົ່ວປະເທດ;

5) **ເງິນຝາກຂອງອົງການຈັດຕັ້ງລັດ** ໝາຍເຖິງ ເງິນຝາກຂອງ ອົງການຈັດຕັ້ງພັກ-ລັດ ແລະ ອົງການຈັດຕັ້ງມະຫາຊົນ ທັງຂັ້ນສູນກາງ ແລະ ທ້ອງຖິ່ນ ເຊັ່ນ: ສະພາແຫ່ງຊາດ, ລັດຖະບານ, ສະພາປະຊາຊົນ ແລະ ອຳນາດການປົກຄອງທ້ອງຖິ່ນ (ຂັ້ນແຂວງ, ເມືອງ ແລະ ບ້ານ), ສານປະຊາຊົນຂັ້ນຕ່າງໆ, ອົງການໄອຍະການປະຊາຊົນຂັ້ນຕ່າງໆ, ສະຖານທູດ ຫຼື ສະຖານກົງສຸນຂອງ ສປປ ລາວ ທີ່ປະຈຳຢູ່ຕ່າງປະເທດ;

6) **ເງິນຝາກຂອງອົງການຈັດຕັ້ງສາກົນ** ໝາຍເຖິງ ເງິນຝາກຂອງ ອົງການຈັດຕັ້ງ ຫຼື ພາກສ່ວນທີ່ຂຶ້ນກັບຕ່າງປະເທດ ແຕ່ມີທີ່ຕັ້ງສຳນັກງານ ຢູ່ ສປປ ລາວ ເຊັ່ນ: ສະຖານທູດຂອງຕ່າງປະເທດທີ່ປະຈຳຢູ່ ສປປ ລາວ, ສະຫະປະຊາຊາດ (UN), ກຸ່ມທະນາຄານໂລກ (WBG), ທະນາຄານພັດທະນາອາຊີ (ADB), ກອງທຶນການເງິນສາກົນ (IMF), ອົງການທີ່ບໍ່ຂຶ້ນກັບລັດຖະບານ (NGO), ອົງການເພື່ອພັດທະນາແມ່ຍິງ ແລະ ເດັກນ້ອຍ (UNICEF), ອົງການຊ່ວຍເຫຼືອລ້າ (JICA ແລະ KOICA), ອົງການເກັບກູ້ລະເບີດ (UXO) ແລະ ອົງການຈັດຕັ້ງສາກົນອື່ນ;

7) **ເງິນຝາກສຳລັບຊື້-ຂາຍຫຼັກຊັບ** ໝາຍເຖິງ ເງິນຝາກຂອງບຸກຄົນ ແລະ ນິຕິບຸກຄົນ ທີ່ເຮັດທຸລະກຳຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວ;

**ສຳລັບເງິນຝາກຂອງຜູ້ບໍລິຫານ ຫຼື ຜູ້ຖືຮຸ້ນລາຍໃຫຍ່ຂອງ ສະມາຊິກເອງ** ທີ່ຝາກຮ່ວມກັບຄອບຄົວ ຫຼື ບຸກຄົນອື່ນ ຊຶ່ງເປັນບັນຊີຮ່ວມນັບແຕ່ສອງຄົນຂຶ້ນໄປ, ໃຫ້ແຍກຈຳນວນເງິນຝາກເປັນສັດສ່ວນຕາມຈຳນວນຜູ້ຝາກເງິນຕົວຈິງ; ເງິນຝາກທັງໝົດໃນສ່ວນຂອງຜູ້ບໍລິຫານ ຫຼື ຜູ້ຖືຮຸ້ນລາຍໃຫຍ່ ແມ່ນບໍ່ໄດ້ຮັບການປົກປ້ອງ.

### 5. ຜູ້ຝາກເງິນຈະໄດ້ຮັບການປົກປ້ອງເງິນຝາກໃນເວລາໃດ?

ຜູ້ຝາກເງິນຈະໄດ້ຮັບການປົກປ້ອງເງິນຝາກໂດຍທັນທີ ໃນເວລາເປີດບັນຊີເງິນຝາກກັບສະມາຊິກຂອງສຳນັກງານປົກປ້ອງເງິນຝາກ ໃນກໍລະນີສະມາຊິກແຫ່ງນັ້ນ ຕົກຢູ່ໃນສະພາວະລົ້ມລະລາຍ ໂດຍມີການຢັ້ງຢືນຈາກ ທະນາຄານແຫ່ງ ສປປ ລາວ, ຜູ້ຝາກເງິນສາມາດດຳເນີນການຂໍຮັບເງິນປົກປ້ອງ ຕາມຂັ້ນຕອນທີ່ສຳນັກງານປົກປ້ອງເງິນຝາກໄດ້ກຳນົດໄວ້.

### 6. ຜູ້ຝາກເງິນຈະໄດ້ຮັບເງິນປົກປ້ອງ ຈຳນວນເທົ່າໃດ?

ຜູ້ຝາກເງິນ ຈະໄດ້ຮັບເງິນປົກປ້ອງຕາມຍອດເຫຼືອເງິນຝາກໃນບັນຊີຂອງຕົນ ສຳລັບຜູ້ຝາກເງິນຮ່ວມໃຫ້ອີງຕາມການແບ່ງສັດສ່ວນຕົວຈິງ ສູງສຸດບໍ່ເກີນ ຈຳນວນ ຫ້າສິບລ້ານ (50.000.000) ກີບ ອີງຕາມວົງເງິນປົກປ້ອງທີ່ກຳນົດໄວ້ໃນປັດຈຸບັນ ຕໍ່ຜູ້ຝາກເງິນໜຶ່ງລາຍ ຕໍ່ສະມາຊິກໜຶ່ງແຫ່ງ. ຖ້າຜູ້ຝາກເງິນຍັງມີຍອດເຫຼືອເງິນກູ້ທີ່ບໍ່

ທັນຊຳລະ ຕ້ອງໄດ້ຫັກລົບກັບຈຳນວນເງິນປົກປ້ອງທີ່ຈະຈ່າຍຕົວຈິງ, ສ່ວນທີ່ຍັງເຫຼືອແມ່ນຈະໄດ້ຮັບຢູ່ໃນຂະບວນການຊຳລະສະສາງຊັບສິນຂອງ ສະມາຊິກທີ່ຢູ່ໃນສະພາວະລົ້ມລະລາຍ..

**ຕົວຢ່າງ ທີ** 1: ທ່ານ ກ ມີບັນຊີເງິນຝາກທີ່ໄດ້ຮັບການປົກປ້ອງ ຢູ່ທະນາຄານ A ຈຳນວນ 03 ບັນຊີ ລວມເປັນເງິນ ທັງໝົດ ຈຳນວນ 45.000.000 ກີບ (ລວມທັງ ຕົ້ນທຶນ ແລະ ດອກເບ້ຍ). ກໍລະນີທະນາຄານ A ຖືກປະກາດຢູ່ໃນສະພາວະລົ້ມລະລາຍ ທ່ານ ກ ຈະໄດ້ຮັບເງິນປົກປ້ອງ ຈຳນວນ 45.000.000 ກີບ ຈາກສຳນັກງານປົກປ້ອງເງິນຝາກ;

**ຕົວຢ່າງ ທີ** 2: ທ່ານ ກ ມີບັນຊີເງິນຝາກທີ່ໄດ້ຮັບການປົກປ້ອງ ຢູ່ທະນາຄານ A ຈຳນວນ 03 ບັນຊີ ລວມເປັນເງິນ ທັງໝົດ ຈຳນວນ 51.500.000 ກີບ (ລວມທັງ ຕົ້ນທຶນ ແລະ ດອກເບ້ຍ). ກໍລະນີທະນາຄານ A ຖືກປະກາດຢູ່ໃນສະພາວະລົ້ມລະລາຍ ທ່ານ ກ ຈະໄດ້ຮັບເງິນປົກປ້ອງ ຈຳນວນ 50.000.000 ກີບ ຈາກສຳນັກງານປົກປ້ອງເງິນຝາກ. ສຳລັບຈຳນວນເງິນທີ່ຍັງເຫຼືອ 1.500.000 ກີບ ທ່ານ ກ ຈະໄດ້ຮັບຄືນຈາກຂະບວນການຊຳລະສະສາງຊັບສິນຂອງທະນາຄານ A ໂດຍອີງຕາມຍອດເຫຼືອຊັບສິນຕົວຈິງຂອງທະນາຄານ A ຕາມບູລິມະສິດການຊຳລະພາຍໃຕ້ກົດໝາຍທີ່ກ່ຽວຂ້ອງ.

**ຕົວຢ່າງ ທີ** 3: ທ່ານ ກ ມີບັນຊີເງິນຝາກທີ່ໄດ້ຮັບການປົກປ້ອງ ຢູ່ທະນາຄານ A ຈຳນວນ 03 ບັນຊີ ລວມເປັນເງິນ ທັງໝົດ ຈຳນວນ 51.500.000 ກີບ (ລວມທັງ ຕົ້ນທຶນ ແລະ ດອກເບ້ຍ), ພ້ອມດຽວກັນນັ້ນ, ທ່ານ ກ ມີໜີ້ຢູ່ທະນາຄານ A ຈຳນວນ 40.000.000 ກີບ. ກໍລະນີທະນາຄານ A ຖືກປະກາດຢູ່ໃນສະພາວະລົ້ມລະລາຍ ທ່ານ ກ ຈະໄດ້ຮັບເງິນປົກປ້ອງພຽງແຕ່ ຈຳນວນ 11.500.000 ກີບ ຈາກສຳນັກງານປົກປ້ອງເງິນຝາກ. ເນື່ອງຈາກ, ຕ້ອງຫັກລົບໜີ້ສິນ ຈຳນວນ 40.000.000 ກີບ.

**ຕົວຢ່າງ ທີ** 4: ທ່ານ ກ ແລະ ທ່ານ ຂ ມີບັນຊີເງິນຝາກທີ່ໄດ້ຮັບການປົກປ້ອງຮ່ວມກັນ ຢູ່ທະນາຄານ A ລວມເປັນເງິນທັງໝົດ ຈຳນວນ 60.000.000 ກີບ (ລວມທັງ ຕົ້ນທຶນ ແລະ ດອກເບ້ຍ); ທ່ານ ກ ແລະ ທ່ານ ຂ ຈະໄດ້ຮັບເງິນປົກປ້ອງຈຳນວນເທົ່າກັນ ຜູ້ລະ 30.000.000 ກີບ ຈາກສຳນັກງານປົກປ້ອງເງິນຝາກ. ກໍລະນີທ່ານ ກ ແລະ ທ່ານ ຂ ລ້ວນແຕ່ມີບັນຊີເງິນຝາກສະເພາະຂອງຕົນ ຢູ່ທະນາຄານ A ອີກຈຳນວນໜຶ່ງ, ສປງ ຈະນຳເອົາຈຳນວນເງິນທີ່ໄດ້ຮັບການແບ່ງປັນຈາກບັນຊີເງິນຝາກຮ່ວມ ບວກໃສ່ກັບຈຳນວນເງິນໃນບັນຊີເງິນຝາກສະເພາະຂອງແຕ່ລະຄົນ ແລະ ຈ່າຍເງິນປົກປ້ອງໃຫ້ຜູ້ຝາກເງິນຕາມຈຳນວນເງິນຕົວຈິງ ແຕ່ບໍ່ເກີນວົງເງິນປົກປ້ອງສູງສຸດຄື 50.000.000 ກີບຕໍ່ຄົນ, ສ່ວນທີ່ເກີນວົງເງິນປົກປ້ອງ ຈະໄດ້ຮັບໃນຂະບວນການຊຳລະສະສາງຊັບສິນຂອງທະນາຄານ A ໂດຍອີງຕາມຍອດເຫຼືອຊັບສິນຕົວຈິງຂອງທະນາຄານ A ຕາມບູລິມະສິດການຊຳລະພາຍໃຕ້ກົດໝາຍທີ່ກ່ຽວຂ້ອງ.

7. **ສຳນັກງານປົກປ້ອງເງິນຝາກ ຈະຈ່າຍເງິນປົກປ້ອງໃຫ້ຜູ້ຝາກເງິນເມື່ອໃດ ແລະ ແບບໃດ?**

ສຳນັກງານປົກປ້ອງເງິນຝາກຈະອອກຄູ່ມືແນະນຳ ຕໍ່ກັບຂັ້ນຕອນການຈ່າຍເງິນປົກປ້ອງ ຊຶ່ງປະກອບມີເງື່ອນໄຂໃນການຢັ້ງຢືນຫຼັກຖານກ່ຽວກັບເງິນຝາກ ແລະ ເອກະສານຢັ້ງຢືນຜູ້ຝາກເງິນ. ສຳນັກງານປົກປ້ອງເງິນຝາກຈະສູ້ຊົນໃນການຈ່າຍເງິນປົກປ້ອງໃຫ້ກັບຜູ້ຝາກເງິນໄວເທົ່າທີ່ຈະໄວໄດ້ ຕາມລະບຽບການທີ່ກຳນົດໄວ້;

8. **ກໍລະນີຜູ້ຝາກເງິນມີເງິນຝາກເປັນສະກຸນເງິນຕາຕ່າງປະເທດ ຈະໄດ້ຮັບເງິນປົກປ້ອງເປັນສະກຸນເງິນໃດ?**

ຜູ້ຝາກເງິນມີເງິນຝາກເປັນສະກຸນເງິນຕາຕ່າງປະເທດ ຈະໄດ້ຮັບເງິນປົກປ້ອງເປັນສະກຸນເງິນກີບ ໂດຍນຳໃຊ້ອັດຕາແລກປ່ຽນ (ອັດຕາຊື້) ທີ່ທະນາຄານແຫ່ງ ສປປ ລາວກຳນົດໃນວັນສຸດທ້າຍຂອງການດຳເນີນທຸລະກິດຂອງສະມາຊິກທີ່ຢູ່ໃນສະພາວະລົ້ມລະລາຍ.

ກໍລະນີຜູ້ຝາກເງິນ ແລະ ສະມາຊິກມີຄວາມສົນໃຈ ຕ້ອງການສອບຖາມເພີ່ມເຕີມກ່ຽວກັບການປົກປ້ອງເງິນຝາກ ສາມາດສຶກສາຂໍ້ມູນ ຈາກເວັບໄຊທ໌ ຂອງສຳນັກງານປົກປ້ອງເງິນຝາກ **www.dpo.gov.la** ຫຼື ຕິດຕໍ່

ທີ່ໝາຍເລກໂທລະສັບ 021 330 005 ແລະ ສາມາດເຂົ້າໄປພົວພັນໄດ້ໃນໂມງລັດຖະການ ທີ່ຫ້ອງການຂອງ ສຳນັກງານປົກປ້ອງເງິນຝາກ ຕັ້ງຢູ່ ຊັ້ນ 4 ຕຶກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຖະໜົນໄກສອນ ພົມວິຫານ ບ້ານໂພນສະອາດ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ນຳໄປຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ.

**ຫົວໜ້າສຳນັກງານປົກປ້ອງເງິນຝາກ**

ທະນາຄານແຫ່ງ ສປປ ລາວ
ສຳນັກງານປົກປ້ອງເງິນຝາກ

**ແສງດາວວີ ວົງຄຳຊາວ**